# ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ເອກະສານລາຍງານການເງິນ

31 ທັນວາ 2018

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ສາລະບານ



| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 11 |
| ໃບລາຍງານກະແສເງິນສົດ | 12 - 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14 - 38 |

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

## ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ ("ສາຂາ") ແມ່ນສາຂາຂອງທະນາຄານກຸງເທບ ຈຳກັດ ມະຫາຊົນ, ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດທີ່ປະເທດໄທ. ສາຂາໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສະບັບເລກທີ 40/ທຫລ ເຊິ່ງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 10 ທັນວາ 2015.

ທຶນຈົດທະບຽນເບື້ອງຕົ້ນຂອງສາຂາ ນະວັນທີ 31 ທັນວາ 2018 ແມ່ນ 101,650,000,000 ກີບ (31 ທັນວາ 2017: 101,650,000,000 ກີບ)

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນເພື່ອຕອບສະໜອງ ການບໍລິການດ້ານການທະນາຄານທົ່ວໄປ ແລະ ບໍລິການດ້ານການເງິນທົ່ວໄປໃນ ສປປ ລາວ.

ສາຂາຕັ້ງຢູ່ເຮືອນເລກທີ 03, ຖະໜົນສາລາຂຽວ-ດົງຈອງ, ບ້ານໂພນສະຫວັນ, ແຂວງຈຳປາສັກ, ສປປ ລາວ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Somchoke Worakunpisit | ຜູ້ຈັດການສາຂາ | 17 ທັນວາ 2015 |

**ຕົວແທນທາງກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ Somchoke Worakunpisit, ຜູ້ຈັດການສາຂາ.

**ຜູ້ກວດສອບ**

ຜູ້ກວດສອບບັນຊີ ຂອງສາຂາ ແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

## ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ ("ສາຂາ") ມີຄວາມຍິນດີນຳສະເໜີບົດລາຍງານ ແລະ ເອກະສານລາຍງານການເງິນຂອງສາຂາ ນະວັນທີ 31 ທັນວາ 2018.

**ຄວາມຮັບຜິດຊອບຂອງ ຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາ ແມ່ນມີຄວາມຮັບຜິດຊອບເອກະສານລາຍງານການເງິນຂອງແຕ່ລະປີການບັນຊີໃຫ້ຖືກຕ້ອງ ຕາມຄວາມເປັນຈິງ ຂອງສາຂາ, ຄວາມຍຸຕິທຳຂອງຖານະທາງການເງິນ ແລະ ກະແສເງິນສົດໃນໄລຍະ ໃນການກະກຽມເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງສາຂາ ຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນບັນດາລາຍການປ່ຽນແປງຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການບັນດາມາດຕະຖານການບັນຊີທີ່ເໝາະສົມໄດ້ຖືກປະຕິບັດຕາມ, ທຸກໆຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ກັບມາດຕະຖານການບັນຊີ ຕ້ອງໄດ້ຮັບການເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ,ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມຕໍ່ເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ສາຂາຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າສາຂາ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ຮັບປະກັນວ່າບັນດາຂໍ້ມູນທາງການເງິນທີ່ຖືກບັນທຶກໄວ້ນັ້ນ ໄດ້ຖືກສະແດງເຖິງຄວາມຖືກຕ້ອງຢູ່ຕະຫຼອດເວລາ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງສາຂາຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງສາຂາ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ປ້ອງກັນການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານ ຢັ້ງຢືນວ່າ ສາຂາ ໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງໃນການກະກຽມ ເອກະສານລາຍງານການເງິນ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານຂອງສາຂາມີຄວາມຍິນດີຖະແຫລງວ່າເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸດຕິທຳກ່ຽວກັບຖານະທາງການເງິນຂອງສາຂາ ນະວັນທີ 31 ທັນວາ 2018 ລວມທັງຜົນການດຳເນີນງານຂອງສາຂາ ແລະ ກະແສເງິນສົດ ນະວັນທີ 31 ທັນວາ 2018 ອີງຕາມກົດໝາຍບັນຊີວິສາຫະກິດຂອງ ສປປ ລາວ ແລະ ປະຕິບັດຕາມລະບຽບການບັນຊີທີ່ກ່ຽວຂ້ອງ ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະ ເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

S. Worakun

ທ່ານ Somchoke Worakunpisit
ຜູ້ຈັດການສາຂາ

ແຂວງຈຳປາສັກ, ສປປ ລາວ

30 ກໍລະກົດ 2019

EY
Building a better working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel. +856 21 455 077
Fax. +856 21 455 078
ey.com

ເລກທີອ້າງອີງ: 61315315/20686883

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຄະນະບໍລິຫານ ຂອງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ**

***ຄຳເຫັນ***

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2018, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດສຳລັບປີທີ່ສິ້ນສຸດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

***ພື້ນຖານການອອກຄຳເຫັນ***

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ"* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ພ້ອມທັງບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ.ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

***ບັນຫາທີ່ຄວນເອົາໃຈໃສ່ – ຫຼັກການທາງການບັນຊີ***

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

Building a better
working world

***ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ***

ຄະນະບໍລິຫານສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ກົດໝາຍວ່າດ້ວຍການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ ແລະ ສໍາລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ວ່າມີຄວາມຈໍາເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫລື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາ ທາງດ້ານຄວາມສືບເນື່ອງໃນການດໍາເນີນທຸລະກິດ ແລະ ນໍາໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດໍາເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

***ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ***

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື  ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄໍາເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດໍາເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສໍາຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນໍາໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດໍາເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດໍາເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ສ້າງຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີກ່ຽວວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນສືບເນື່ອງໃນການດໍາເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານ

EY

Building a better working world

ການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານ ກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

Ernst & Young Lao Ltd

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ນະຄອນຫລວງວຽງຈັນ, ສປປ ລາວ

30 ກໍລະກົດ 2019

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| *ລຳດັບ* | *ລາຍການ* | *ບົດ ອະທິບາຍ ເລກທີ* | *2018 ກີບ* | *2017 ກີບ* |
|---|---|---|---|---|
| **A.** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1.** | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **3** | **3,126,390,334** | **2,188,063,383** |
| **2.** | **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | **3** | **(248,674,028)** | **(133,121,258)** |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **2,877,716,306** | **2,054,942,125** |
| **3** | **ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ** | **4** | **257,909,158** | **293,439,489** |
| **4** | **ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່ານາຍໜ້າ** | **4** | **(87,540,000)** | **(37,165,000)** |
| **5** | **ກຳໄລ ສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **5** | **1,404,181,751** | **607,081,222** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **4,452,267,215** | **2,918,297,836** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບອື່ນໆຈາກການດຳເນີນງານ** | **6** | **19,294,668** | **84,949** |
| **7** | **ລາຍຈ່າຍຄ່າບໍລິຫານງານ** | | **(3,470,840,362)** | **(3,209,373,058)** |
| 7.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍບຸກຄະລາກອນອື່ນໆ | 7 | (2,082,854,650) | (1,894,417,948) |
| 7.2 | ລາຍຈ່າຍອື່ນໆໃນການບໍລິຫານ | 8 | (1,373,945,260) | (1,299,040,882) |
| 7.3 | ລາຍຈ່າຍການດຳເນີນງານອື່ນໆ | | (14,040,452) | (15,914,228) |
| **8** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | **15, 16** | **(585,349,740)** | **(878,583,215)** |
| **9** | **ລາຍຈ່າຍອື່ນໆຈາກການດຳເນີນງານ** | **9** | **(4,560,000)** | **(182,625,600)** |
| **III.** | **ກຳໄລ/(ຂາດທຶນ) ກ່ອນຫັກອາກອນ** | | **410,811,781** | **(1,352,199,088)** |
| **10** | **ອາກອນກຳໄລປີ** | **22** | **-** | **-** |
| **IV.** | **ກຳໄລ/(ຂາດທຶນ) ສຸດທິພາຍໃນປີ** | | **410,811,781** | **(1,352,199,088)** |

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

ກະກຽມໂດຍ:

ທ່ານ Vixaya Chareunsouk
ພະນັກງານບັນຊີ

ອະນຸມັດໂດຍ:

ທ່ານ Somchoke Worakunpisit
ຜູ້ຈັດການສາຂາ

ແຂວງຈຳປາສັກ, ສປປ ລາວ

30 ກໍລະກົດ 2019

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານຖານະການເງິນ
ມະວັນທີ 31 ທັນວາ 2018

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2018 ກີບ* | *31 ທັນວາ 2017 ກີບ (ດັດແກ້ຕົວເລກຄືນ)* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກ ຢູ່ທະນາຄານແຫ່ງ ສປປ ລາວ** | | **16,391,435,961** | **52,828,403,560** |
| 1 | ເງິນສົດໃນຄັງ | 10 | 4,002,196,277 | 1,591,973,915 |
| 2 | ຍອດເຫຼືອເງິນຝາກ ຢູ່ ທະນາຄານແຫ່ງ ສປປ ລາວ | 11 | 12,389,239,684 | 51,236,429,645 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **54,480,511,082** | **52,228,487,933** |
| 1 | ເງິນຝາກກະແສລາຍວັນ | 12.1 | 9,480,511,082 | 27,228,487,933 |
| 2 | ເງິນຝາກມີກຳນົດ | 12.2 | 45,000,000,000 | 25,000,000,000 |
| **III** | **ການລົງທຶນໃນຫຼັກຊັບ** | | **20,000,000,000** | **10,000,000,000** |
| 1 | ຫຼັກຊັບຖືໄວ້ຈົນຄົບກຳນົດ | 13 | 20,000,000,000 | 10,000,000,000 |
| **IV** | **ເງິນກູ້ ແລະ ເງິນຈ່າຍລ່ວງໜ້າໃຫ້ລູກຄ້າ** | **14** | **14,217,881,664** | **15,100,826,097** |
| **V** | **ຊັບສິນບັດຄົງທີ່** | | **2,775,628,319** | **3,350,971,559** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 15 | 2,775,628,319 | 3,350,348,894 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 16 | - | 622,665 |
| **VI** | **ຊັບສິນອື່ນໆ** | | **6,325,140,743** | **5,469,525,174** |
| 1 | ດອກເບ້ຍຄ້າງຮັບ | 17 | 600,245,971 | 331,140,388 |
| 2 | ຊັບສິນອື່ນໆ | 18 | 5,724,894,772 | 5,138,384,786 |
| | **ລວມຊັບສິນ** | | **114,190,597,769** | **138,978,214,323** |

## ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2018 ກີບ* | *31 ທັນວາ 2017 ກີບ (ດັດແກ້ຄືນເລກຄືນ)* |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນໆ** | **19** | **9,290,750,000** | **5,078,000,000** |
| | ເງິນຝາກມີກຳນົດໃຫ້ທະນາຄານອື່ນໆ | | 9,290,750,000 | 5,078,000,000 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **20** | **7,545,012,261** | **8,309,505,919** |
| 1 | ເງິນຝາກກະແສລາຍວັນໃຫ້ແກ່ລູກຄ້າ | | 6,305,804,322 | 7,801,485,371 |
| 2 | ເງິນຝາກມີກຳນົດໃຫ້ແກ່ລູກຄ້າ | | 1,239,207,939 | 507,280,228 |
| 3 | ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | - | 740,320 |
| **III** | **ໜີ້ສິນອື່ນໆ** | | **207,821,114** | **28,842,494,771** |
| 1 | ດອກເບ້ຍຄ້າງຈ່າຍ | 21 | 36,709,979 | 27,496,045 |
| 2 | ອາກອນຄ້າງຈ່າຍ | 22.1 | 2,147,225 | 1,811,450 |
| 3 | ໜີ້ຕ້ອງຈ່າຍອື່ນໆ | 23 | 168,963,910 | 28,813,187,276 |
| | **ລວມຍອດໜີ້ສິນ** | | **17,043,583,375** | **42,230,000,690** |
| **III** | **ທຶນ ແລະ ຄັງສຳຮອງ** | | **97,147,014,394** | **96,748,213,633** |
| 1 | ທຶນຈົດທະບຽນຖອກແລ້ວ | 24 | 101,650,000,000 | 101,650,000,000 |
| 2 | ຄັງສະສົມຕາມລະບຽບການ | 14.2 | 170,614,580 | 182,625,600 |
| 3 | ຂາດທຶນສະສົມ | | (4,673,600,186) | (5,084,411,967) |
| | **ລວມຍອດທຶນ** | | **97,147,014,394** | **96,748,213,633** |
| | **ລວມໜີ້ສິນ ແລະ ທຶນ** | | **114,190,597,769** | **138,978,214,323** |

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2018 ກີບ* | *31 ທັນວາ 2017 ກີບ* |
|---|---|---|---|---|
| **II** | **ຫຼັກຊັບຄໍ້າປະກັນ ແລະ ການຈໍານອງ** | | | |
| **A** | **ຫຼັກຊັບຄໍ້າປະກັນ ແລະ ການຈໍານອງເພື່ອກູ້ຢືມ** | | **18,400,960,000** | **18,400,960,000** |
| 1 | ຫຼັກຊັບຄໍ້າປະກັນ ແລະ ຊັບຈໍານອງເພື່ອກູ້ຢືມຂອງລູກຄ້າ ແລະ ເງິນຈ່າຍລ່ວງໜ້າໃຫ້ແກ່ລູກຄ້າ | | 18,400,960,000 | 18,400,960,000 |
| **B** | **ຫຼັກຊັບຄໍ້າປະກັນ ແລະ ການຈໍານອງເພື່ອກູ້ຢືມ** | | **-** | **-** |
| | **ລວມຍອດຫຼັກຊັບຄໍ້າປະກັນ ແລະ ການຈໍານອງ** | | **18,400,960,000** | **18,400,960,000** |

ກະກຽມໂດຍ:

ທ່ານ Vixaya Chareunsouk
ພະນັກງານບັນຊີ

ອະນຸມັດໂດຍ:

ທ່ານ Somchoke Worakunpisit
ຜູ້ຈັດການສາຂາ

ແຂວງຈໍາປາສັກ, ສປປ ລາວ

30 ກໍລະກົດ 2019

## ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| | *ທຶນຈົດທະບຽນຖອກແລ້ວ* *ກີບ* | *ຄັງສະສົມຕາມລະບຽບການ* *ກີບ* | *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ* *ກີບ* | *ຂາດທຶນສະສົມ* *ກີບ* | *ລວມ* *ກີບ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 01 ມັງກອນ 2017** | **101,650,000,000** | **-** | **-** | **(3,732,212,879)** | **97,917,787,121** |
| ຂາດທຶນສຸດທິພາຍໃນປີ | | | | (1,352,199,088) | **(1,352,199,088)** |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ *(ບົດອະທິບາຍເລກທີ 14.2)* | - | - | 182,625,600 | - | **182,625,600** |
| **ຍອດເຫຼືອນະວັນທີ 31 ທັນວາ 2017** | **101,650,000,000** | **-** | **182,625,600** | **(5,084,411,967)** | **96,748,213,633** |
| ກຳໄລສຸດທິພາຍໃນປີ | | | | 410,811,781 | **410,811,781** |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ *(ບົດອະທິບາຍເລກທີ 14.2)* | - | - | (19,218,220) | - | **(19,218,220)** |
| ສ່ວນຕ່າງຈາກອັດຕາແລກປ່ຽນ | - | - | 7,207,200 | - | **7,207,200** |
| **ຍອດເຫຼືອນະວັນທີ 31 ທັນວາ 2018** | **101,650,000,000** | **-** | **170,614,580** | **(4,673,600,186)** | **97,147,014,394** |

ກະກຽມໂດຍ:

ທ່ານ Vixaya Chareunsouk
ພະນັກງານບັນຊີ

ອະນຸມັດໂດຍ:

ທ່ານ Somchoke Worakunpisit
ຜູ້ຈັດການສາຂາ

ແຂວງຈຳປາສັກ, ສປປ ລາວ

30 ກໍລະກົດ 2019

# ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| *ລາຍການ* | *ບົດອະທິບາຍເລກທີ* | *31 ທັນວາ 2018 ກີບ* | *31 ທັນວາ 2017 ກີບ* |
|---|---|---|---|
| **ກຳໄລ/(ຂາດທຶນ) ສຸດທິກ່ອນຫັກອາກອນ** | | **410,811,781** | **(1,352,199,088)** |
| *ດັດແກ້ສຳລັບ* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 15,16 | 585,349,740 | 878,583,215 |
| ລາຍຈ່າຍເງິນແຮສຳລັບກິດຈະກຳສິນເຊື່ອ | 14.2 | (19,218,220) | 182,625,600 |
| ລາຍຮັບດອກເບ້ຍ | | (3,126,390,334) | (2,188,063,383) |
| ລາຍຈ່າຍດອກເບ້ຍ | | 248,674,028 | 133,121,258 |
| **ກະແສເງິນສົດໃຊ້ເຂົ້າໃນການດຳເນີນງານກ່ອນການປ່ຽນແປງຂອງ ຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **(1,900,773,005)** | **(2,345,932,398)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງ ຊັບສິນ ຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | (20,054,001,635) | 9,540,684,019 |
| ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ | | (10,000,000,000) | 10,000,000,000 |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | 882,944,434 | (15,100,826,097) |
| ຊັບສິນອື່ນໆ | | (579,302,786) | 664,505,147 |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນຈາກການດຳເນີນງານ | | | |
| ຕ້ອງສົ່ງທະນາຄານອື່ນ | | 4,212,750,000 | 5,078,000,000 |
| ເງິນຝາກໃຫແກ່ລູກຄ້າ | | (764,493,658) | 6,325,633,344 |
| ໜີ້ສິນອື່ນໆ | | (28,643,887,590) | 19,242,324,532 |
| ດອກເບ້ຍທີ່ໄດ້ຮັບ | | 2,857,284,751 | 2,094,145,217 |
| ດອກເບ້ຍທີ່ໄດ້ຈ່າຍ | | (239,460,096) | (114,052,491) |
| **ກະແສເງິນສົດສຸດທິ (ໃຊ້ໃນ)/ຈາກ ໃນກິດຈະກຳການດຳເນີນງານ** | | **(54,228,939,585)** | **35,384,481,273** |
| **ກິດຈະກຳການລົງທຶນ** | | | |
| ລາຍຈ່າຍຊື້ ແລະ ກໍ່ສ້າງຊັບສົມບັດຄົງທີ່ ແລະ ຊັບສົມບັດຄົງທີ່ອື່ນໆ | | (10,006,500) | (90,856,821) |
| **ກະແສເງິນສົດສຸດທິໃຊ້ເຂົ້າກິດຈະກຳການລົງທຶນ** | | **(10,006,500)** | **(90,856,821)** |
| **ກິດຈະກຳທາງການເງິນ** | | - | - |
| **ການປ່ຽນແປງເງິນສົດ ແລະ ທຽບເທົ່າເງິນສົດສຸດທິ** | | **(54,238,946,085)** | **35,293,624,452** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **79,612,575,512** | **44,318,951,060** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **25** | **25,373,629,427** | **79,612,575,512** |

## ທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

ກະກຽມໂດຍ:

ທ່ານ Vixaya Chareunsouk
ພະນັກງານບັນຊີ

ອະນຸມັດໂດຍ:

ທ່ານ Somchoke Worakunpisit
ຜູ້ຈັດການສາຂາ

ແຂວງຈຳປາສັກ, ສປປ ລາວ

30 ກໍລະກົດ 2019

## 1. ຂໍ້ມູນກ່ຽວກັບສາຂາ

*ການສ້າງຕັ້ງ ແລະ ການດຳເນີນງານ*

ທະນາຄານ ກຸງເທບ ຈຳກັດ (ມະຫາຊົນ), ສາຂາປາກເຊ ("ສາຂາ") ແມ່ນສາຂາຂອງທະນາຄານກຸງເທບ ຈຳກັດ ມະຫາຊົນ, ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດທີ່ປະເທດໄທ. ສາຂາໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສະບັບເລກທີ. 40/ທຫລ ເຊິ່ງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 10 ທັນວາ 2015.

*ທຶນຈົດທະບຽນທີ່ຖອກແລ້ວ*

ທຶນຈົດທະບຽນເບື້ອງຕົ້ນຂອງສາຂາ ນະວັນທີ 31 ທັນວາ 2018 ແມ່ນ 101,650,000,000 ກີບ (31 ທັນວາ 2017: 101,650,000,000 ກີບ).

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການທາງດ້ານການທະນາຄານທົ່ວໄປ ແລະ ບໍລິການທາງດ້ານການເງິນ ໃນ ສປປ ລາວ.

*ຄະນະບໍລິຫານ*

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Somchoke Worakunpisit | ຜູ້ຈັດການສາຂາ | 17 ທັນວາ 2015 |

*ທີ່ຕັ້ງ*

ສາຂາຕັ້ງຢູ່ເຮືອນເລກທີ 03, ຖະໜົນສາລາຂຽວ-ດົງຈອງ, ບ້ານໂພນສະຫວັນ, ແຂວງຈຳປາສັກ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂານະວັນທີ 31 ທັນວາ 2018 ມີ 08 ຄົນ (2017: ມີ 08 ຄົນ).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### 2.1 *ຖະແຫຼງການກ່ຽວກັບຄວາມສອດຄ່ອງ*

ຄະນະບໍລິຫານຂອງສາຂາຂໍ້ຢັ້ງຢືນວ່າໄດ້ກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍບັນຊີ ຂອງ ສປປ ລາວ ແລະ ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

### 2.2 *ພື້ນຖານຂອງການກະກຽມ*

ສາຂາຍັງຄົງດຳເນີນການບັນທຶກບັນຊີໃນສະກຸນເງິນກີບ ("ກີບ") ແລະ ກະກຽມເອກະສານລາຍງານການເງິນ ເປັນຫົວໜ່ວຍພັນກີບ ຕາມດຳລັດ ເລກທີ 02/ນຍ ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 22 ມີນາ 2000 ແລະ ກົດໝາຍບັນຊີ ຂອງ ສປປ ລາວ ແລະ ກົດລະບຽບການບັນຊີອື່ນໆທີ່ກ່ຽວຂ້ອງທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ("ລະບົບບັນຊີລາວ").

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນໄດ້ຮັບ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ສະນັ້ນ ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີຂອງສາຂາ ແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### 2.3. *ການປ່ຽນແປງຂອງນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບ ເອກະສານລາຍງານການເງິນທີ່ກະກຽມສຳລັບການລາຍງານຂອງທະນາຄານ ນະປີສິ້ນສຸດວັນທີ 31 ທັນວາ 2017, ຍົກເວັ້ນການປ່ຽນແປງນະໂຍບາຍການບັນຊີ ແລະ ບົດອະທິບາຍທີ່ກ່ຽວກັບການດຳເນີນງານດັ່ງຕໍ່ໄປນີ້:

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍ ເລກທີ 2.8, ໃນວັນທີ 29 ມິຖຸນາ 2016 ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ປະກາດໃຊ້ ຂໍ້ຕົກລົງ ເລກທີ 512/ທຫລ ("ທຫລ512") ກ່ຽວກັບ ການຈັດຊັ້ນໜີ້ ແລະ ການຫັກເງິນແຮຄ່າເສື່ອມ ສຳລັບກິດຈະກຳສິນເຊື່ອ, ເຊິ່ງມີຜົນບັງຄັບໃຊ້ ໃນວັນທີ 27 ກັນຍາ 2018 ແລະ ໄດ້ຖືກນຳໃຊ້ປ່ຽນແທນ ຂໍ້ ຕົກລົງ ເລກທີ 324/ທຫລ ລົງວັນທີ 19 ເມສາ 2011. ໃນວັນທີ 14 ພະຈິກ 2018, ກົມຄຸ້ມຄອງທະນາຄານທຸລະກິດ ໄດ້ອອກຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ ເພື່ອກຳນົດຄຳແນະນຳໃນການປະຕິບັດຕໍ່ກັບ ຂໍ້ຕົກລົງ ເລກທີ 512/ທຫລ. ລະບຽບການເຫຼົ່ານີ້ນຳໄປສູ່ການປ່ຽນແປງທີ່ສຳຄັນໃນນະໂຍບາຍການບັນຊີດັ່ງຕໍ່ໄປນີ້:

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

**2.3. *ການປ່ຽນແປງຂອງນະໂຍບາຍການບັນຊີ* (ຕໍ່)**

- ການຈັດຊັ້ນໜີ້: ປ່ຽນແປງ ແລະ ເພີ່ມເຕີມ ຂໍ້ກຳນົດໃນການຈັດຊັ້ນໜີ້ ສຳລັບເງິນກູ້ທີ່ມີການປັບໂຄງສ້າງ
- ເງິນແຮຄ່າເສື່ອມ: ເພີ່ມທາງເລືອກສຳລັບການຄິດໄລ່ເງິນແຮຄ່າເສື່ອມໂດຍການລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່.
- ພາລະຜູກພັນ: ເພີ່ມເຕີມການຮັບຮູ້, ການຈັດຊັ້ນ ແລະ ການຫັກເງິນແຮ ສຳລັບພາລະຜູກພັນທາງການເງິນ.

ເນື່ອງຈາກບໍ່ມີຄຳແນະນຳຈາກ ທຫລ ໃນການຈັດຕັ້ງປະຕິບັດລະບຽບໃໝ່ທີ່ມີຜົນກະທົບຍ້ອນຫຼັງ, ທະນາຄານຈຶ່ງໄດ້ເລືອກຈັດຕັ້ງປະຕິບັດການປ່ຽນແປງນີ້ໃນພາຍໜ້າ. ດັ່ງນັ້ນ, ມູນຄ່າ ແລະ ການນຳສະເໜີການປຽບທຽບໂຕເລກທັງໝົດສຳລັບປີ 2017 ແມ່ນຍັງຮັກສາໄວ້ຄືເກົ່າ.

**2.4. *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ***

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໂດຍອີງຕາມຫຼັກການບັນຊີແບບຄ້າງຮັບຄ້າງ ຈ່າຍທີ່ນຳໃຊ້ວິທີຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ເມື່ອຄະນະບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

**2.5. *ການຮັບຮູ້ຄ່າທຳນຽມ ແລະ ຄ່າບໍລິການ.***

ຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມມີ ການຊຳລະການຄ້າ), ຄ່າທຳນຽມ ເກີດຂຶ້ນຈາກທຸລະກຳການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຈາກການຄ້ຳປະກັນທາງການເງິນ.

ຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຫລັກການເງິນສົດ.

**2.6. *ເງິນສົດ ແລະ ທຽບເທົ່າເງິນສົດ***

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງໂດຍມີອາຍຸຄົບກຳນົດ ຕ່ຳກວ່າ ຫຼື ເທົ່າກັບ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕ່ຳກວ່າ ຫຼື ເທົ່າກັບ 30 ວັນ.

**2.7 *ເງິນກູ້ໃຫ້ລູກຄ້າ***

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.8 ການຈັດຊັ້ນໜີ້ ແລະ ເງິນແຮຄ່າເສື່ອມສຳລັບກິດຈະກຳສິນເຊື່ອ*

*ການຈັດຊັ້ນເງິນກູ້*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ (BOL 512) ລົງວັນທີ 29 ມິຖຸນາ 2018 ແລະ ຄຳແນະນຳການຈັດຕັ້ງປະຕິບັດເລກທີ 898/ກຄທ (BOL 898) ລົງວັນທີ 14 ພະຈິກ 2018, ທະນາຄານ ໄດ້ຈັດຊັ້ນເງິນກູ້ ເປັນ 5 ກຸ່ມ ໂດຍອີງຕາມ ປະຫວັດການຄ້າງຈ່າຍ ແລະ ປັດໄຈດ້ານຄຸນນະພາບອື່ນໆ. ເງິນກູ້ ທີ່ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫລື ໜີ້ສົງໄສ (ກຸ່ມ D) ຫລື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ("NPL").

*ເງິນແຮສຳລັບເງິນກູ້*

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ, ທະນາຄານຕ້ອງໄດ້ສ້າງເງິນແຮ ໂດຍອີງຕາມການຈັດຊັ້ນໜີ້ຂອງແຕ່ລະກຸ່ມດັ່ງຕໍ່ໄປນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດຄັງເງິນແຮ (i)* | *ການບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | | | | |
| A | 0.5 %(*) | ຄັງເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| B | 3% | ຄັງເງິນແຮສະເພາະ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | | | | |
| C | 20% (*) | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

(i) ຈຳນວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ລຸ່ມນີ້:

a. ເງິນແຮທົ່ວໄປ = ອັດຕາເງິນແຮ x ຍອດເຫຼືອເງິນກູ້

b. ເງິນແຮສະເພາະ = ອັດຕາເງິນແຮ x (ຍອດເຫຼືອເງິນກູ້ - ມູນຄ່າສ່ວນຫຼຸດຂອງຫຼັກຊັບຄ້ຳປະກັນ)

ເຊິ່ງທະນາຄານສາມາດເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່ເງິນແຮ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.8 *ການຈັດຊັ້ນໜີ້ ແລະ ເງິນແຮຄ່າເສື່ອມສຳລັບກິດຈະກຳສິນເຊື່ອ* (ຕໍ່)

(ii) ຍອດເຫຼືອເງິນແຮຂອງເງິນກູ້ທີ່ເກີດດອກອອກຜົນແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ຄັງເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ".

ຍອດເຫຼືອສະສົມຂອງເງິນແຮຂອງເງິນກູ້ທີ່ບໍ່ເກີດດອກອອກຜົນແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນກູ້ໃຫ້ລູກຄ້າຫຼັງ ,ຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ".

(iii) ສ່ວນປ່ຽນແປງສຳລັບເງິນແຮຂອງເງິນກູ້ທີ່ເກີດດອກອອກຜົນແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບການເກັບຄືນລາຍຈ່າຍເງິນແຮ.

ສ່ວນປ່ຽນແປງສຳລັບເງິນແຮຂອງເງິນກູ້ທີ່ບໍ່ເກີດດອກອອກຜົນແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍ (ເກັບຄືນ)/ເງິນແຮສຸດທິສຳລັບໜີ້ຕ້ອງຮັບທວງຍາກ.

(*) ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018, ທາງສາຂາໄດ້ນຳໃຊ້ອັດຕາການຫັກເງິນແຮ 1.20% ສຳລັບເງິນແຮທີ່ເປັນ ໜີ້ປົກກະຕິ (ກຸ່ມ A) ແລະ ອັດຕາການຫັກເງິນແຮ 36% ທີ່ຖືກຈັດເປັນໜີ້ຕ່ຳກວ່າມາດຕະຖານ (ກຸ່ມ C) ອັດຕາດຽວກັນກັບທະນາຄານກຸງເທບ ຈຳກັດ (ມະຫາຊົນ), ສາຂານະຄອນຫຼວງວຽງຈັນ. ສາຂາແມ່ນໄດ້ຮັບການອະນຸມັດຈາກ ທະນາຄານ ແຫ່ງ ສປປ ລາວ ໃຫ້ນຳໃຊ້ອັດຕາ 36% ສຳລັບເງິນແຮ ສຳລັບໜີ້ຕ່ຳກວ່າມາດຕະຖານ (ກຸ່ມ C) ທີ່ໄດ້ຮັບການອະນຸມັດຈາກ ທຫລ ໂດຍອີງຕາມຈົດໝາຍລັດຖະການ ເລກທີ 304/ທຫລ ລົງວັນທີ 11 ກັນຍາ 2014.

### 2.9 *ຫຼັກຊັບລົງທຶນຖືໄວ້ຈົນຄົບກຳນົດ*

ການລົງທຶນໃນຫຼັກຊັບທີ່ຖືໄວ້ຈົນຄົບກຳນົດແມ່ນຫລັກຊັບໜີ້ທີ່ມີກຳນົດ ຫລື ການຊຳລະທີ່ມີກຳນົດ ແລະ ມື້ຄົບກຳນົດເຊິ່ງທະນາຄານໃຫ້ຄວາມໃສ່ໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດເພື່ອສ້າງຜົນໄດ້ຮັບດອກເບ້ຍ. ເມື່ອຫລັກຊັບດັ່ງກ່າວຖືກຂາຍກ່ອນມື້ຄົບກຳນົດຫລັກຊັບເຫລົ່ານັ້ນຈະຖືກຈັດປະເພດ ເປັນຫລັກຊັບທາງການຄ້າ ຫລື ຫລັກຊັບປະເພດມີໄວ້ເພື່ອຂາຍ.

ຊັບທີ່ຖືໄວ້ຈົນຄົບກຳນົດແມ່ນຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ຖືກລາຍງານຕາມຕົ້ນທຶນໃນປີຕໍ່ໄປ. ຄ່າທຳນຽມ ແລະ ສ່ວນຫຼຸດ ຈາກການຊື້ຫຼັກຊັບທີ່ມີການຈັດຈຳໜ່າຍໃນໃບລາຍງານຜົນການດຳເນີນງານ ໂດຍການໃຊ້ວິທີແບບເສັ້ນຊື່ຕະຫຼອດໄລຍະຈາກມື້ເລີ່ມຈົນຮອດມື້ຄົບກຳນົດ.

ເປັນແຕ່ລະໄລຍະຫລັກຊັບທີ່ຖືໄວ້ຈົນມື້ຄົບກຳນົດແມ່ນຂຶ້ນກັບການທົບທວນຄືນການເສື່ອມມູນຄ່າ, ຄ່າເສື່ອມຂອງຫລັກຊັບເຫລົ່ານັ້ນ ຈະຖືກຄິດໄລ່ເມື່ອເຫັນວ່າມູນຄ່າຍຸດຕິທຳຕ່ຳກວ່າມູນຄ່າເດີມຫຼາຍ ຫລື ຕໍ່ເນື່ອງເປັນເວລາຍາວນານ, ຄ່າເສື່ອມແມ່ນຖືກຮັບຮູ້ເປັນ ກຳໄລ/(ຂາດທຶນ) ສຸດທິຈາກການລົງທຶນໃນຫລັກຊັບ" ໃນໃບລາຍງານຜົນການດຳເນີນງານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.10 ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ລວມມີຊັບສິນບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ, ຊັບສິນບັດຄົງທີ່ມີຕົວຕົນລວມມີ ຕຶກອາຄານ ແລະ ການປັບປຸງ, ເຄື່ອງໃຊ້ຫ້ອງການ, ເຟີນີເຈີ ແລະ ເຄື່ອງຕົບແຕ່ງ, ອຸປະກອນຄອມພິວເຕີ ແລະ ພາຫານະ, ຊັບສິນບັດຄົງ ທີ່ບໍ່ມີຕົວຕົນປະກອບມີ ຕົ້ນທຶນໃນການສ້າງຕັ້ງ ແລະ ໂປຣແກຼມຄອມພິວເຕີ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານດ້ວຍຕົ້ນທຶນລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສິນບັດຄົງທີ່ສາມາດນຳໃຊ້ໄດ້.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ຕົ້ນທຶນ ແລະ ຄ່າຫຼູ້ຍຫ້ຽນສະສົມຂອງຊັບສິນບັດທີ່ຂາຍອອກແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນ ແລະ ບັນດາກຳໄລ-ຂາດທຶນຈາກການຂາຍອອກແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມ/ຄ່າເສື່ອມມູນຄ່າຈະຖືກລະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫລື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

### *2.11 ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່.*

